ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພະລັງງານ ແລະບໍ່ແຮ່
ຫ້ອງການກະຊວງ

ເລກທີ 5356 /ພບ.ຫກ
ນະຄອນຫຼວງວຽງຈັນ, ວັນທີ 11 ທັນວາ 2023

# ໜັງສືແຈ້ງເຊີນປະມູນ

ເຖິງ : ບັນດາບໍລິສັດ ແລະ ລັດວິສາຫະກິດໂຮງພິມ ທັງພາກລັດ ແລະ ເອກະຊົນ ໃນຂອບເຂດ ນະຄອນຫຼວງວຽງຈັນ
ເລື່ອງ:ເຂົ້າຮ່ວມສະເໜີລາຄາ ເພື່ອຈັດພິມໜັງສືພິມ ພະລັງງານແລະ ບໍ່ແຮ່ ແບບລາຍປັກ ປະຈຳປີ 2024.

- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017.
- ອີງຕາມຂໍ້ຕົກລົງຂອງທ່ານລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ສະບັບເລກທີ 42/ພບ, ລົງວັນທີ 13/01/2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງພະລັງງານ ແລະ ບໍ່ແຮ່.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການ ປະມູນຈັດຊື້-ຈັດຈ້າງ ກໍ່ສ້າງ ແລະ ສ້ອມແປງ ສະບັບເລກທີ 1709/ພບ, ລົງວັນທີ 24/08/2022.

ຫ້ອງການກະຊວງພະລັງງານ ແລະ ບໍ່ແຮ່ ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດ ແລະ ວິສາຫະກິດໂຮງພິມ ທັງພາກລັດ ແລະ ເອກະຊົນ ໃນຂອບເຂດນະຄອນຫຼວງວຽງຈັນ ທີ່ມີຄວາມສົນໃຈ ເຂົ້າສະເໜີລາຄາ ເພື່ອຈັດພິມໜັງສືພິມ ພະລັງງານແລະ ບໍ່ແຮ່ ແບບລາຍປັກ ປະຈຳປີ 2024 ລາຍລະອຽດມີດັ່ງນີ້:

1. ໜັງສືພິມພະລັງງານ ແລະ ບໍ່ແຮ່ ມີຂະໜາດ 30x42 ຊັງຕີແມັດ, ລວມມີ 16ໜ້າ/ສະບັບ ໃນນີ້, ມີໜ້າສີ 4 ໜ້າ, ຈັດພິມ 2 ຄັ້ງຕໍ່ເດືອນ (ທຸກໆວັນທີ 1 ແລະ ວັນທີ 15 ຂອງແຕ່ລະເດືອນ), ພິມຄັ້ງ1 ຈຳນວນ 4.000 ສະບັບ;
2. ມື້ຂາຍຊອງປະມູນ ເລີ່ມແຕ່ວັນທີ 11-27 ທັນວາ 2023 ຕາມໂມງລັດຖະການ (ວັນຈັນ-ວັນພຸດ) ເລີ່ມແຕ່ເວລາ 8:30ໂມງ-16:00 ໂມງ ຢູ່ຊັ້ນ 3 ຕຶກ1 ກະຊວງ ພະລັງງານ ແລະ ບໍ່ແຮ່;
3. ຜູ້ທີ່ມີຈຸດປະສົງເຂົ້າຮ່ວມປະມູນ ຈະຕ້ອງໄດ້ເສຍຄ່າເອກະສານປະມູນເປັນເງິນສົດ ຈຳນວນ 1.000.000 (ໜຶ່ງລ້ານ) ກີບ/ຊອງ.
4. ມື້ສົ່ງ ແລະ ເປີດຊອງປະມູນແມ່ນວັນທີ 5 ມັງກອນ 2024 ເລີ່ມແຕ່ເວລາ 1:30 ໂມງ ຢູ່ຫ້ອງປະຊຸມ 102 ຫ້ອງການກະຊວງພະລັງງານ ແລະ ບໍ່ແຮ່, ຖ້າສົ່ງກາຍກຳ ນົດເວລາ ຈະບໍ່ໄດ້ຮັບການພິຈາລະນາ.
5. ເງື່ອນໄຂ, ຄຳແນະນຳ ແລະ ແບບຟອມການປະມູນ ໄດ້ຄັດຕິດຊ້ອນທ້າຍໃນຊຸດຊອງການປະມູນ.
6. ຜູ້ທີ່ສະໝັກເຂົ້າຮ່ວມການປະມູນ ຈະຕ້ອງປະກອບເອກະສານຕາມແບບຟອມແນະນຳ ແລະ ເງື່ອນໄຂທີ່ກຳນົດໄວ້ໃຫ້ຄົບຖ້ວນ.
7. ຜູ້ທີ່ເຂົ້າມາພົວພັນສະເໜີລາຄາໃຫ້ແຕ່ງກາຍສຸພາບ (ເພດຍິງນຸ່ງສິ້ນລາວ, ເພດຊາຍນຸ່ງໂສ້ງຂາຍາວ ແລະ ເສື້ອ ສຸພາບ).

ດັ່ງນັ້ນ, ຈຶ່ງຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດ ແລະ ລັດວິສາຫະກິດ ໂຮງພິມ ທີ່ມີຄວາມສົນໃຈ ສະໝັກເຂົ້າຮ່ວມປະມູນຕາມແຈ້ງເຊີນນີ້ດ້ວຍ.

ຫົວໜ້າຫ້ອງການ

ຄຳໄສ ກຸໂພຄຳ

ຕິດຕໍ່ປະສານງານ
- ທ່ານ ນາງ ມີລຸ່ ຄຳປະເສີດ ໂທ: 020 22224128